ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------ 000 ------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 208 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 30.07.2007.

# ດຳລັດ

# ວ່າດ້ວຍນາມມະຍົດຂອງຄູ ແຫ່ງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 03/ສພຊ, ລົງວັນທີ 8 ເມສາ 2000.
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ສະບັບເລກທີ 193/ສສ.07 ລົງວັນທີ 28 ມິນາ 2007.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ດຳລັດສະບັບນີ້ວາງອອກ ເພື່ອກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບການພິຈາລະນາໃຫ້ນາມມະຍົດ ແລະ ນະໂຍບາຍ ແກ່ຄູຜູ້ທີ່ໄດ້ອຸທິດຊີວິດ, ເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການສິດສອນ, ການພັດທະນາການສຶກສາ, ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ຈະເລີນກ້າວໜ້າ ໂດຍຈາລຶກຜົນງານ, ຄຸນງາມຄວາມດີ ພ້ອມທັງເຊີດຊູຖານະບົດບາດ ແລະ ກຽດສັກສີຂອງຄູ ໃຫ້ເປັນທີ່ເຄົາລົບ ແລະ ນັບຖືຂອງສັງຄົມ.

**ມາດຕາ 2: ນາມມະຍົດຂອງຄູ**

ນາມມະຍົດຂອງຄູ ໝາຍເຖິງກຽດປະຫວັດອັນສູງສົ່ງທີ່ປະເທດຊາດມອບໃຫ້ແກ່ຄູຜູ້ທີ່ມີຜົນງານ, ຄຸນງາມຄວາມດີຕໍ່ປະເທດຊາດ ແລະ ຕໍ່ການພັດທະນາການສຶກສາ.

**ມາດຕາ 3: ປະເພດນາມມະຍົດຂອງຄູ**

ນາມມະຍົດຂອງຄູແບ່ງອອກເປັນ 2 ປະເພດຄື: ຄູແຫ່ງຊາດ ແລະ ຄູປະຊາຊົນ.
ຄູແຫ່ງຊາດ ແມ່ນຄູທີ່ໄດ້ສ້າງຄຸນງາມຄວາມດີອັນສູງສົ່ງ ແລະ ເປັນຜູ້ຖືກຄັດເລືອກໄດ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 5 ຂອງດຳລັດສະບັບນີ້.
ຄູປະຊາຊົນ ແມ່ນຄູທີ່ມີຜົນງານດີເດັ່ນ ແລະ ເປັນຜູ້ທີ່ຖືກຄັດເລືອກໄດ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 6 ຂອງດຳລັດສະບັບນີ້.

**ມາດຕາ 4: ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ກັບຜູ້ສອນ ແລະ ບຸກຄະລາກອນການສຶກສາ ທີ່ປະຕິບັດໜ້າທີ່ ສິດສອນ, ສຶກສາອົບຮົມ ແລະ ຄຸ້ມຄອງນັກຮຽນ - ນັກສຶກສາ ເປັນປົກກະຕິ ຢູ່ໃນໂຮງຮຽນ, ສູນການສຶກສາ ແລະ ສະຖາບັນການສຶກສາ ແຫ່ງຕ່າງໆຂອງຊາດ.

## ໝວດທີ II
## ມາດຕະຖານ ແລະເງື່ອນໄຂນາມມະຍົດຄູ ແຫ່ງຊາດ

**ມາດຕາ 5: ນາມມະຍົດຄູແຫ່ງຊາດ**

ຜູ້ທີ່ຈະໄດ້ຮັບນາມມະຍົດຄູແຫ່ງຊາດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂດັ່ງນີ້ :

**5.1. ດ້ານແນວຄິດການເມືອງ ແລະ ຄຸນສົມບັດ**

1. ມີຄຸນສົມບັດສົມທຳປະຕິວັດ ແລະ ອຸດົມການສັງຄົມນິຍົມ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ ແລະ ມີແບບແຜນດຳລົງຊີວິດທີ່ໂປ່ງໃສ
2. ເປັນສະມາຊິກຂອງພັກ ປະຊາຊົນ ປະຕິວັດລາວ ຢ່າງໜ້ອຍ 5 ປີຂຶ້ນໄປ
3. ເປັນແບບຢ່າງທີ່ດີໃນການປະຕິບັດລະບຽບກົດໝາຍ ຂອງລັດ
4. ເປັນຜູ້ທີ່ມີຄຸນນະທຳ, ມີຄວາມສາມັກຄີ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກມະຫາຊົນ
5. ມີຄວາມພາກພຽນ,ຄວາມອົດທົນ, ຫົວຄິດປະດິດສ້າງ, ມີນ້ຳໃຈເສຍສະຫຼະອັນສູງສົ່ງ ແລະ ມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານຂອງຄູເປັນຢ່າງດີ
6. ມີຈັນຍາທຳຂອງຄູທີ່ດີ

**5.2. ດ້ານປະສົບການ ແລະ ຜົນງານ**

1. ໄດ້ດຳເນີນການສິດສອນ, ສຶກສາອົບຮົມ ແລະ ຄຸ້ມຄອງນັກຮຽນ-ນັກສຶກສາຢ່າງໜ້ອຍ 25 ປີ ( 20 ປີສຳລັບເຂດພູດອຍ, ຫ່າງໄກສອກຫຼີກ ແລະ ຫຍຸ້ງຍາກພິເສດ ) ຫຼື ເຄີຍໄດ້ຮັບນາມມະຍົດຄູປະຊາຊົນມາແລ້ວ;

2. ມີແຟ້ມສະສົມຜົນງານໃນການປະກອບວິຊາຊີບຄູ;

3. ມີບົດຂຽນ ກ່ຽວກັບການຮຽນ-ການສອນ ຫຼື ບົດຄົ້ນຄວ້າວິທະຍາສາດການສຶກສາ ຫລື ຜະລິດນະວັດຕະກໍາໃໝ່ໆ ຊຶ່ງເປັນທີ່ຍອມຮັບໃນວົງການສຶກສາ ແລະ ສັງຄົມ;
4. ມີໃບຢັ້ງຢືນການຝຶກອົບຮົມທາງດ້ານວິຊາການທີ່ສາມາດນໍາໃຊ້ໄດ້ຢ່າງມີປະສິດທິຜົນ;
5. ມີແຜນການສອນ, ອຸປະກອນ ແລະ ສື່ການສອນ; ສອນໄດ້ຢ່າງຊໍານິຊໍານານຈົນເປັນທີ່ຍອມຮັບໃນວົງການສຶກສາ ແລະ ສັງຄົມທົ່ວໄປ;
6. ເປັນແບບຢ່າງທີ່ດີໃນການພັດທະນາໂຮງຮຽນ, ປຸກລະດົມຂົນຂວາຍມະຫາຊົນເຂົ້າຮ່ວມຂະບວນການພັດທະນາການສຶກສາ ແລະ ພັດທະນາຊຸມຊົນ ໂດຍໄດ້ຮັບໃບຢັ້ງຢືນ ຫລື ໃບຍ້ອງຍໍຈາກການຈັດຕັ້ງທີ່ກ່ຽວຂ້ອງທີ່ຈັດເປັນປະເພດດີເລີດ.

## ໝວດທີ III
## ມາດຕະຖານ ແລະ ເງື່ອນໄຂນາມມະຍົດຄູປະຊາຊົນ

**ມາດຕາ 6: ນາມມະຍົດຄູປະຊາຊົນ**

ຜູ້ທີ່ຈະໄດ້ຮັບນາມມະຍົດ ຄູປະຊາຊົນ ຕ້ອງມີມາດຕະຖານ ແລະ ເງື່ອນໄຂດັ່ງນີ້ :

**6.1. ດ້ານແນວຄິດການເມືອງ ແລະ ຄຸນສົມບັດ**

1. ມີຄຸນສົມບັດສົມທໍາປະຕິວັດ ແລະ ອຸດົມການສັງຄົມນິຍົມ,ມີທັດສະນະຫຼັກໝັ້ນການເມືອງ ໜັກແໜ້ນ, ມີຄວາມຈົງຮັກພັກດີ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ ແລະ ມີແບບແຜນດໍາລົງຊີວິດທີ່ໂປ່ງໃສ;
2. ໄດ້ເຂົ້າເປັນສະມາຊິກຂອງພັກປະຊາຊົນປະຕິວັດລາວ ຢ່າງໜ້ອຍ 3 ປີຂຶ້ນໄປ;
3. ເປັນແບບຢ່າງທີ່ດີໃນການປະຕິບັດລະບຽບກົດໝາຍຂອງລັດ;
4. ເປັນຜູ້ທີ່ມີຄຸນນະທໍາ, ມີຄວາມສາມັກຄີ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກມະຫາຊົນ;
5. ມີຄວາມພາກພຽນ,ຄວາມອົດທົນ, ທັດສະນະຄິດປະດິດສ້າງ, ມີນໍ້າໃຈເສຍສະຫຼະອັນສູງສົ່ງ ແລະ ມີຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານຂອງຄູເປັນຢ່າງດີ;
6. ມີຈັນຍາທໍາຂອງຄູທີ່ດີ.

**6.2. ດ້ານປະສົບການ ແລະ ຜົນງານ**

1. ໄດ້ດໍາເນີນການສິດສອນ, ສຶກສາອົບຮົມ ແລະ ຄຸ້ມຄອງນັກຮຽນ-ນັກສຶກສາຢ່າງໜ້ອຍ 20 ປີ (15 ປີສໍາລັບເຂດພູດອຍ ຫ່າງໄກສອກຫຼີກ ແລະ ຫຍຸ້ງຍາກພິເສດ );
2. ມີແຟ້ມສະສົມຜົນງານໃນການປະກອບວິຊາຊີບຄູ;
3. ມີໃບຢັ້ງຢືນການຝຶກອົບຮົມທາງດ້ານວິຊາການ ທີ່ສາມາດນໍາໃຊ້ໄດ້ຢ່າງມີປະສິດທິຜົນ;
4. ມີແຜນການສອນ, ອຸປະກອນ ແລະ ສື່ການສອນ; ສອນໄດ້ຢ່າງຊໍານິຊໍານານ ຈົນກາຍເປັນແບບ ຢ່າງທີ່ດີໃຫ້ແກ່ຄູສອນທັງຫຼາຍ;

5. ເປັນແບບຢ່າງທີ່ດີໃນການພັດທະນາໂຮງຮຽນ, ປຸກລະດົມຂົນຂວາຍມະຫາຊົນ ເຂົ້າຮ່ວມຂະບວນການພັດທະນາການສຶກສາ ແລະ ພັດທະນາຊຸມຊົນ ໂດຍໄດ້ຮັບການຢັ້ງຢືນ ຫລື ໃບຍ້ອງຍໍຈາກການຈັດຕັ້ງທີ່ກ່ຽວຂ້ອງ ທີ່ຈັດເປັນປະເພດດີ.

## ໝວດທີ IV

## ຄະນະກຳມະການ ແລະ ການພິຈາລະນາ ນາມມະຍົດ

**ມາດຕາ 7: ຄະນະກຳມະການພິຈາລະນາໃຫ້ນາມມະຍົດ**

**7.1. ຄະນະກຳມະການພິຈາລະນານາມມະຍົດຂອງຄູຂັ້ນກະຊວງສຶກສາທິການ**

| | |
|---|---|
| 1. ລັດຖະມົນຕີວ່າການກະຊວງສຶກສາທິການ | ເປັນປະທານໂດຍຕຳແໜ່ງ |
| 2. ຫົວໜ້າຫ້ອງການກະຊວງ | ເປັນຮອງປະທານໂດຍຕຳແໜ່ງ |
| 3. ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຮອງປະທານໂດຍຕຳແໜ່ງ |
| 4. ຫົວໜ້າຄະນະກວດກາການສຶກສາ | ເປັນກຳມະການໂດຍຕຳແໜ່ງ |
| 5. ຫົວໜ້າກົມສ້າງຄູ | ເປັນກຳມະການໂດຍຕຳແໜ່ງ |
| 6. ຫົວໜ້າກົມສາມັນສຶກສາ | ເປັນກຳມະການໂດຍຕຳແໜ່ງ |
| 7. ຫົວໜ້າກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ | ເປັນກຳມະການໂດຍຕຳແໜ່ງ |
| 8. ຫົວໜ້າກົມການສຶກສານອກໂຮງຮຽນ | ເປັນກຳມະການໂດຍຕຳແໜ່ງ |
| 9. ຫົວໜ້າກົມພະລະສຶກສາ | ເປັນກຳມະການໂດຍຕຳແໜ່ງ |
| 10. ຫົວໜ້າກົມການສຶກສາພາກເອກະຊົນ | ເປັນກຳມະການໂດຍຕຳແໜ່ງ |
| 11. ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ | ເປັນກຳມະການໂດຍຕຳແໜ່ງ |
| 12. ຫົວໜ້າກົມການເງິນ | ເປັນກຳມະການໂດຍຕຳແໜ່ງ |
| 13. ປະທານຄະນະບໍລິຫານງານສະຫະພັນກຳມະບານກະຊວງ | ເປັນກຳມະການໂດຍຕຳແໜ່ງ |
| 14. ປະທານຄະນະບໍລິຫານງານສະຫະພັນແມ່ຍິງກະຊວງ | ເປັນກຳມະການໂດຍຕຳແໜ່ງ |
| 15. ເລຂາຄະນະບໍລິຫານງານຊາວໜຸ່ມກະຊວງ | ເປັນກຳມະການໂດຍຕຳແໜ່ງ |
| 16. ຫົວໜ້າພະແນກສະຫວັດດີການ ກົມຈັດຕັ້ງ ແລະ ພະນັກງານ | ເປັນເລຂານຸການ |

**7.2. ຄະນະກຳມະການພິຈາລະນານາມມະຍົດຂອງຄູຂັ້ນແຂວງ/ນະຄອນ.**

| | |
|---|---|
| 1. ເຈົ້າແຂວງ ຫຼື ຮອງເຈົ້າແຂວງ ທີ່ຊີ້ນຳວຽກງານສຶກສາ | ເປັນປະທານໂດຍຕຳແໜ່ງ |
| 2. ຫົວໜ້າຄະນະຈັດຕັ້ງແຂວງ | ເປັນຮອງປະທານໂດຍຕຳແໜ່ງ |
| 3. ຫົວໜ້າພະແນກສຶກສາປະຈຳແຂວງ/ນະຄອນ | ເປັນຮອງປະທານໂດຍຕຳແໜ່ງ |
| 4. ປະທານຄະນະບໍລິຫານງານສະຫະພັນກຳມະບານແຂວງ | ເປັນກຳມະການໂດຍຕຳແໜ່ງ |
| 5. ປະທານຄະນະບໍລິຫານງານສະຫະພັນແມ່ຍິງແຂວງ | ເປັນກຳມະການໂດຍຕຳແໜ່ງ |

6. ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ເປັນກຳມະການໂດຍຕຳແໜ່ງ
7. ຫົວໜ້າຄະນະກວດກາການສຶກສາແຂວງ ເປັນກຳມະການໂດຍຕຳແໜ່ງ
8. ຫົວໜ້າຂະແໜງສາມັນສຶກສາ ເປັນກຳມະການໂດຍຕຳແໜ່ງ
9. ຫົວໜ້າຂະແໜງພັດທະນາຄູ ເປັນກຳມະການໂດຍຕຳແໜ່ງ
10. ຫົວໜ້າຂະແໜງການສຶກສານອກໂຮງຮຽນ ແລະ ວິຊາຊີບ ເປັນກຳມະການໂດຍຕຳແໜ່ງ
11. ຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນເລຂານຸການ

**7.3. ຄະນະກຳມະການພິຈາລະນານາມມະຍົດຂອງຄູຂັ້ນເມືອງ**

1. ເຈົ້າເມືອງ ຫຼື ຮອງເຈົ້າເມືອງທີ່ຊີ້ນຳວຽກງານສຶກສາ ເປັນປະທານໂດຍຕຳແໜ່ງ
2. ຫົວໜ້າຄະນະຈັດຕັ້ງເມືອງ ເປັນຮອງປະທານໂດຍຕຳແໜ່ງ
3. ຫົວໜ້າພະແນກສຶກສາປະຈຳເມືອງ/ເທດສະບານ ເປັນຮອງປະທານໂດຍຕຳແໜ່ງ
4. ປະທານຄະນະບໍລິຫານງານສະຫະພັນກຳມະບານເມືອງ ເປັນກຳມະການໂດຍຕຳແໜ່ງ
5. ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ ເປັນກຳມະການໂດຍຕຳແໜ່ງ
6. ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ ເປັນກຳມະການໂດຍຕຳແໜ່ງ
7. ຫົວໜ້າຄູສຶກສານິເທດເມືອງ ເປັນກຳມະການໂດຍຕຳແໜ່ງ
8. ຫົວໜ້າໜ່ວຍງານສາມັນສຶກສາ ເປັນກຳມະການໂດຍຕຳແໜ່ງ
9. ຫົວໜ້າໜ່ວຍງານພັດທະນາຄູ ເປັນກຳມະການໂດຍຕຳແໜ່ງ
10. ຫົວໜ້າໜ່ວຍງານສຶກສານອກໂຮງຮຽນ ແລະ ວິຊາຊີບ ເປັນກຳມະການໂດຍຕຳແໜ່ງ
11. ຫົວໜ້າໜ່ວຍງານຈັດຕັ້ງ ແລະ ພະນັກງານ ເປັນເລຂານຸການ

**ມາດຕາ 8 : ການສະເໜີ ແລະ ພິຈາລະນານາມມະຍົດ**

8.1. ໂຮງຮຽນ ຫຼື ສູນການສຶກສາ ຫຼື ສະຖາບັນການສຶກສາ ເປັນຜູ້ຄົ້ນຄວ້າ, ຄັດເລືອກ ແລະ ນຳສະເໜີຄູຜູ້ທີ່ມີມາດຕະຖານ, ເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນ ຕໍ່ຂັ້ນເທິງທີ່ຂຶ້ນກັບ ເພື່ອພິຈາລະນາ ໂດຍຜ່ານຄະນະພັກຂັ້ນຂອງຕົນ.

8.2. ຄະນະກຳມະການພິຈາລະນານາມມະຍົດຂອງຄູຂັ້ນເມືອງ ເປັນຜູ້ຄົ້ນຄວ້າ ແລະ ຄັດເລືອກຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂຖືກຕ້ອງ ຕາມການສະເໜີຂອງໂຮງຮຽນຕ່າງໆ ໂດຍຜ່ານຄະນະພັກຂັ້ນຂອງຕົນ ແລ້ວນຳສະເໜີຄະນະກຳມະການຂັ້ນແຂວງ ເພື່ອພິຈາລະນາ;

8.3. ຄະນະກຳມະການພິຈາລະນານາມມະຍົດຂອງຄູຂັ້ນແຂວງ / ນະຄອນ ເປັນຜູ້ຄົ້ນຄວ້າ ແລະ ຄັດເລືອກຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂຖືກຕ້ອງຕາມການສະເໜີຂອງຄະນະກຳມະການຂັ້ນເມືອງ ໂດຍຜ່ານຄະນະພັກຂັ້ນຂອງຕົນ ແລ້ວນຳສະເໜີຄະນະກຳມະການຂັ້ນກະຊວງ ເພື່ອພິຈາລະນາ.

8.4. ຄະນະກຳມະການຂັ້ນກະຊວງ ເປັນຜູ້ຄົ້ນຄວ້າ ແລະ ຄັດເລືອກ ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂຖືກຕ້ອງ ຕາມການສະເໜີຂອງຄະນະກຳມະການຂັ້ນແຂວງ, ນະຄອນ ຫລື ສະຖາບັນການສຶກສາ

ຕ່າງໆ ໂດຍຜ່ານຄະນະພັກຂັ້ນຂອງຕົນ ແລ້ວນຳສະເໜີທ່ານນາຍົກລັດຖະມົນຕີ ເພື່ອພິຈາລະນາ.

**ມາດຕາ 9: ການຕົກລົງມອບນາມມະຍົດ**

9.1. ການມອບນາມມະຍົດຄູແຫ່ງຊາດ ແມ່ນປະທານປະເທດເປັນຜູ້ຕົກລົງຕາມການສະເໜີຂອງນາຍົກລັດຖະມົນຕີ;

9.2. ການມອບນາມມະຍົດຄູປະຊາຊົນ ແມ່ນນາຍົກລັດຖະມົນຕີ ເປັນຜູ້ຕົກລົງ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ.

**ມາດຕາ 10: ການຈັດຕັ້ງມອບນາມມະຍົດ**

ທຸກໆຫ້າປີໃຫ້ມີການຈັດຕັ້ງປະຕິບັດມອບຮັບນາມມະຍົດໜຶ່ງຄັ້ງ ໂດຍໃຫ້ຖືເອົາວັນຄູ ແຫ່ງຊາດເປັນວັນມອບຮັບຢ່າງເປັນທາງການ.

## ໝວດທີ V
## ນະໂຍບາຍ ແລະ ມາດຕະການຕໍ່ຜູ້ທີ່ໄດ້ຮັບນາມມະຍົດ

**ມາດຕາ 11: ນະໂຍບາຍຕໍ່ຜູ້ທີ່ໄດ້ຮັບນາມມະຍົດຄູແຫ່ງຊາດ**

ຜູ້ທີ່ໄດ້ຮັບນາມມະຍົດຄູແຫ່ງຊາດ ຈະໄດ້ຮັບນະໂຍບາຍດັ່ງນີ້ :

1. ຫຼຽນຄູແຫ່ງຊາດ ພ້ອມທັງໃບຍັ້ງຢືນ;
2. ເລື່ອນຂັ້ນເງິນເດືອນ 5 ຂັ້ນ ຖ້າເປັນຄູສັງກັດລັດ;
3. ລາງວັນຈຳນວນໜຶ່ງ ຊຶ່ງຈະໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 12: ນະໂຍບາຍຕໍ່ຜູ້ທີ່ໄດ້ຮັບນາມມະຍົດຄູປະຊາຊົນ**

ຜູ້ທີ່ໄດ້ຮັບນາມມະຍົດຄູປະຊາຊົນ ຈະໄດ້ຮັບນະໂຍບາຍດັ່ງນີ້ :

1. ຫຼຽນຄູປະຊາຊົນ ພ້ອມທັງໃບຍັ້ງຢືນ
2. ເລື່ອນຂັ້ນເງິນເດືອນ 3 ຂັ້ນ ຖ້າເປັນຄູສັງກັດລັດ
3. ລາງວັນຈຳນວນໜຶ່ງ ຊຶ່ງຈະໄດ້ກຳນົດໄວ້ຕ່າງຫາກ

**ມາດຕາ 13: ການຖອນນາມມະຍົດ**

ຜູ້ທີ່ໄດ້ຮັບນາມມະຍົດຄູແຫ່ງຊາດ ຫຼື ຄູປະຊາຊົນ ຫາກມີການກະທຳທີ່ເສື່ອມເສຍກຽດສັກສີ, ມີການປະພຶດທີ່ຜິດຕໍ່ກົດໝາຍຢ່າງຮ້າຍແຮງ ແລະ ຖືກຕັດອິດສະຫຼະພາບແຕ່ 5 ປີ ຂຶ້ນໄປ ຈະຖືກພິຈາລະນາ ແລະ ນຳສະເໜີຂັ້ນເທິງ ເພື່ອຕົກລົງຖອນນາມມະຍົດດັ່ງກ່າວ ຕາມລະບຽບການ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 14: ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ອອກບົດແນະນຳລະອຽດໃນການຈັດຕັ້ງປະຕິບັດ ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ, ໂຮງຮຽນ ແລະ ສະຖານທີ່ການສຶກສາແຫ່ງຕ່າງໆຂອງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 15: ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດໃຊ້ບັງຄັບ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ